# ສັດລ້ຽງເພື່ອຫຼິ້ນຈະ "ສະຫຼອງບຸນກຸດຈີນ" ເປັນຄືແນວໃດ?



ບຸນກຸດຈີນ ເປັນບຸນປະເພນີ ທີ່ຄຶກຄື້ນທີ່ສຸດ ຂອງຈີນ ແລະ ກໍເປັນມື້ບຸນສຳຄັນທີ່ສະມາຊິກພາຍໃນຄອບຄົວມາເຕົ້າໂຮມສາມັກຄີກັນ. ໄລຍະພັກບຸນກຸດຈີນ ປີ 2025 ໃກ້ຈະໝູນວຽນມາເຖິງແລ້ວ, ບັນຍາກາດການສະຫຼອງບຸນຢູ່ທ້ອງຖິ່ນຕ່າງໆ ກໍນັບມື້ນັບເຂັ້ມຂຸ້ນ. ເວົ້າສຳລັບຊາວເມືອງທີ່ລ້ຽງສັດລ້ຽງເພື່ອຫຼິ້ນແລ້ວ, ບໍ່ວ່າຈະກັບໄປສະຫຼອງບຸນຢູ່ບ້ານເກີດ ຫຼື ໄປທ່ຽວຕ່າງແຂວງ, ຈະໃຫ້ສັດລ້ຽງເພື່ອຫຼິ້ນ ທີ່ບໍ່ມີຄວາມສະດວກໃນການເດີນທາງ "ສະຫຼອງມື້ບຸນເປັນຢ່າງດີ" ໄດ້ກາຍເປັນຫົວຂໍ້ຈຸດສຸມໃນສັງຄົມ.

## ສັດລ້ຽງເພື່ອຫຼິ້ນ ກໍໄດ້ຮັບການບໍລິການຝາກລ້ຽງເຊັ່ນດຽວກັນ

ຄຽງຄູ່ກັບບຸນກຸດຈີນປີນີ້ ໄດ້ໝູນວຽນມາເຖິງ, ມີຊາວເມືອງຫຼາຍຄົນທີ່ລ້ຽງສັດລ້ຽງເພື່ອຫຼິ້ນ ຕ້ອງກັບໄປສະຫຼອງບຸນຢູ່ບ້ານເກີດຂອງຕົນ, ດັ່ງນັ້ນ, ການຝາກລ້ຽງສັດລ້ຽງເພື່ອຫຼິ້ນ ມີຄວາມຕ້ອງການນັບມື້ນັບຫຼາຍຂຶ້ນ. ເພື່ອເຮັດໃຫ້ສັດເຫຼົ່ານີ້ໄດ້ຮັບການເບິ່ງແຍງດູແລເປັນຢ່າງດີ, ຮ້ານຂາຍສັດລ້ຽງເພື່ອຫຼິ້ນ ໄດ້ສະໜອງການບໍລິການຝາກລ້ຽງນັບມື້ນັບຫຼາຍຂຶ້ນ.

ນາງ ເສິນເຟີຍ ຊາວເມືອງນະຄອນຊຽງໄຮ້ ກ່າວວ່າ: ໃນໄລຍະພັກບຸນກຸດຈີນ ປີນີ້, ນາງກຽມຈະໄປທ່ຽວຕ່າງປະເທດພ້ອມຄອບຄົວ, ແຕ່ນຳສັດໄປບໍ່ໄດ້, ສະນັ້ນ, ການເບິ່ງແຍງສັດ ໄດ້ກາຍເປັນບັນຫາໃຫຍ່. ນາງໄດ້ປຽບທຽບສອງຮ້ານຢູ່ໃກ້ເຮືອນຕົນ, ໃນທີ່ສຸດ, ນາງ ໄດ້ເລືອກຝາກລ້ຽງໝາຂອງຕົນຢູ່ໃນຮ້ານແຫ່ງໜຶ່ງ.

ຍັງອີກສອງອາທິດ, ບຸນກຸດຈີນກໍຈະໝູນວຽນມາເຖິງແລ້ວ, ຢູ່ນະຄອນຫາງໂຈ່ວ ແຂວງເຈີ້ຈຽງ ຈີນ, ຄວາມຕ້ອງການໃນການຝາກລ້ຽງສັດ ໄດ້ນັບມື້ນັບຫຼາຍຂຶ້ນ, ລາຄາຝາກລ້ຽງຂອງຮ້ານຕ່າງໆໃນໄລຍະພັກບຸນກຸດຈີນ ກໍໄດ້ເພີ່ມສູງຂຶ້ນເລື້ອຍໆ, ໂກຕ້າຈອງຝາກລ້ຽງລ່ວງໜ້າຂອງຫຼາຍຮ້ານ ກໍມີຫຼາຍກວ່າ 50% ແລ້ວ.

ປັດຈຸບັນ, ຮູບການຝາກລ້ຽງສັດລ້ຽງເພື່ອຫຼິ້ນ ມີເຮືອນພັກສັດ, ສວນສະໜຸກ ສັດ, ໂຮງໝໍສັດ, ຮ້ານຂາຍສັດ ແລະ ຄອບຄົວຮັບຝາກລ້ຽງສັດ. ຮູບການຝາກລ້ຽງທີ່ຕ່າງກັນ ກໍຈະເກັບລາຄາຕ່າງກັນ ແລະ ມີສະພາບແວດລ້ອມຝາກລ້ຽງຕ່າງກັນ. ໃນໄລຍະຝາກລ້ຽງ, ຮ້ານຝາກລ້ຽງຈະມີພະນັກງານປະຈຳການຕະຫຼອດ 24 ຊົ່ວໂມງ ເພື່ອຮັບປະກັນໃຫ້ສັດລ້ຽງໄດ້ກິນອາຫານ, ນຳພາສັດເລາະຫຼິ້ນ ແລະ ທຳຄວາມສະອາດສັດລ້ຽງເຫຼົ່ານີ້ຕາມເວລາກຳນົດ ພ້ອມທັງຖ່າຍວິດີໂອສົ່ງໃຫ້ເຈົ້າຂອງສັດ ເພື່ອໃຫ້ເຈົ້າຂອງຮັບຮູ້ສະພາບການກ່ຽວກັບສັດຕົນໃນທຸກເວລາ.



## ແມ່ລ້ຽງສັດຊົ່ວຄາວເຂົ້າມາລ້ຽງຢູ່ເຮືອນ

ນອກຈາກການຝາກລ້ຽງແລ້ວ, ຍັງມີຊາວຈີນຈຳນວນໜຶ່ງເລືອກອີກວິທີໜຶ່ງເພື່ອເບິ່ງແຍງດູແລສັດຂອງຕົນ, ນັ້ນກໍຄື, ໃນເວລາເຈົ້າຂອງອອກເດີນທາງ, ໃຫ້ແມ່ລ້ຽງຊົ່ວຄາວເຂົ້າມາລ້ຽງ ແລະ ທຳຄວາມສະອາດສັດຢູ່ເຮືອນຕົນ.

ໃນຊຸມປີຜ່ານມາ, ຄຽງຄູ່ກັບປະຊາຊົນຜູ້ລ້ຽງສັດລ້ຽງເພື່ອຫຼິ້ນນັບມື້ນັບຫຼາຍຂຶ້ນ, ຄວາມຕ້ອງການໃຫ້ແມ່ລ້ຽງຊົ່ວຄາວເຂົ້າມາລ້ຽງສັດຢູ່ເຮືອນ ກໍນັບມື້ນັບຫຼາຍຂຶ້ນ. ອີກເຄິ່ງເດືອນບຸນກຸດຈີນ ຈຶ່ງຈະໝູນວຽນມາເຖິງ, ມີເຈົ້າຂອງສັດຫຼາຍຄົນ ໄດ້ຊອກແມ່ລ້ຽງຊົ່ວຄາວໃຫ້ແກ່ສັດລ້ຽງຂອງຕົນແລ້ວ.

ນາງ ສຽວຣວງ ທີ່ເຮັດວຽກຢູ່ນະຄອນຫາງໂຈ່ວມາຈາກແຂວງກວາງຕຸ້ງ, ປີນີ້ ນາງ ກຽມຈະສະຫຼອງບຸນກຸດຈີນຢູ່ນະຄອນຫາງໂຈ່ວ, ພ້ອມດຽວກັນນັ້ນ, ຍັງສາມາດສ້າງລາຍຮັບໄດ້ ດ້ວຍການລ້ຽງສັດເພື່ອຄົນອື່ນ, ນາງ ກ່າວວ່າ: "ປີນີ້ ຈະບໍ່ກັບໄປສະຫຼອງບຸນກຸດຈີນຢູ່ບ້ານເກີດ, ມີ 8 ຄົນໄດ້ບອກຂ້ອຍວ່າ, ໃຫ້ໄປລ້ຽງແມວຢູ່ເຮືອນເຂົາເຈົ້າ, ຄາດວ່າ, ບຸນກຸດຈີນປີນີ້ ຂ້ອຍກໍມີວຽກຫຼາຍພໍສົມຄວນ."

ໃນເວລາໄປລ້ຽງສັດຢູ່ເຮືອນເຈົ້າຂອງສັດ, ແມ່ລ້ຽງຊົ່ວຄາວຈະໃສ່ຖົງເກີບ, ສົບມື, ຖົງຂີ້ເຫຍື້ອ ແລະ ນ້ຳຢາຂ້າເຊື້ອ, ພາຍຫຼັງເຂົ້າໄປໃນເຮືອນເຈົ້າຂອງແລ້ວ, ຈະຖ່າຍວິດີໂອໄປນຳ ຫຼື ແຊັດຫາເຈົ້າຂອງໂດຍຜ່ານທາງວິດີໂອຕະຫຼອດການ. ນອກຈາກໃຫ້ອາຫານ, ໃຫ້ນ້ຳ, ປັດກວາດຂີ້ສັດ ແລະ ທຳຄວາມສະອາດທີ່ກ່ຽວຂ້ອງແລ້ວ, ຍັງຕ້ອງກວດສະພາບແວດລ້ອມໃນເຮືອນ ແລະ ສະພາບຂອງສັດ, ຫຼິ້ນນຳສັດເປັນໄລຍະໜຶ່ງ, ແຕ່ລະຄັ້ງຈະຕ້ອງເສຍເວລາປະມານ 20 ຫາ 30 ນາທີ.

ນາງ ຫວາງ ຈາກນະຄອນໜານໜິງເຂດປົກຄອງຕົນເອງເຜົ່າຈ້ວງກວາງຊີເຫັນວ່າ: "ຍ້ອນວ່າແມວຕົນເປັນແມວປະເພດອ່ອນໄຫວ, ຖ້າໄປບ່ອນທີ່ບໍ່ເຄີຍໄປ, ມັນຈະຮູ້ສຶກຢ້ານ." ດັ່ງນັ້ນ, ເວົ້າສຳລັບສັດປະເພດນີ້ແລ້ວ, ການໃຫ້ແມ່ລ້ຽງຊົ່ວຄາວໄປລ້ຽງຢູ່ເຮືອນເຈົ້າຂອງເປັນວິທີທີ່ດີ, ສັດລ້ຽງເຫຼົ່ານີ້ຈະຮູ້ສຶກມີຄວາມປອດໄພດີ ໃນສະພາບແວດລ້ອມທີ່ຄຸ້ນເຄີຍ.

(ສະໜອງຂໍ້ມູນໂດຍ: ສູນການສື່ສານສາກົນພາກພື້ນອາຊີໃຕ້-ອາຊີຕາເວັນອອກສ່ຽງໃຕ້ ແຂວງຢຸນນານ)

ynzhanba@163.com
laos.yunnangateway.com

### ເນື້ອໃນເພີ່ມເຕີມ

"ປຶ້ມປົກຂາວກ່ຽວກັບຂະແໜງການສັດລ້ຽງເພື່ອຫຼິ້ນຂອງຈີນປີ 2025 (ບົດລາຍງານການບໍລິໂພກ)" ລະບຸວ່າ: ປີ 2025, ຈຳນວນສັດລ້ຽງເພື່ອຫຼິ້ນຂອງຈີນ ມີເຖິງ 124,11 ລ້ານໂຕ, ເພີ່ມຂຶ້ນ 2,1% ເມື່ອທຽບໃສ່ປີ 2023; ຂະໜາດຂອງຕະຫຼາດການບໍລິໂພກ (ໝາ ແລະ ແມວ) ໃນຕົວເມືອງໄດ້ເພີ່ມຂຶ້ນ 7,5%, ໄດ້ບັນລຸເຖິງ 300 ຕື້ຢວນ.

ໃນຊຸມປີຜ່ານມາ, ຄຽງຄູ່ກັບເສດຖະກິດສັດລ້ຽງເພື່ອຫຼິ້ນຂອງຈີນ ໄດ້ຮັບການພັດທະນາ, ການບໍລິການຕ່າງໆ ເຊັ່ນ: ການຝາກລ້ຽງສັດ, ການທຳຄວາມສະອາດສັດ, ການຖ່າຍຮູບສັດ, ໂຮງຮຽນສັດ ແລະ ການໄປລ້ຽງເຖິງຢູ່ເຮືອນເປັນຕົ້ນ ນັບມື້ນັບຫຼາຍຂຶ້ນ ເຊິ່ງໄດ້ເຮັດໃຫ້ມີຫຼາຍອາຊີບໃໝ່ເກີດຂຶ້ນ ເຊັ່ນ: ຊ່າງຝຶກສັດລ້ຽງເພື່ອຫຼິ້ນ, ຊ່າງຖ່າຍຮູບສັດລ້ຽງເພື່ອຫຼິ້ນ, ຊ່າງບຳລຸງສຸຂະພາບສັດລ້ຽງເພື່ອຫຼິ້ນ ແລະ ອື່ນໆ.

ເດືອນທັນວາ ປີ 2024, "ບຸນກຸດຈີນ ທີ່ເປັນພຶດຕິກຳທາງສັງຄົມສະຫຼອງບຸນປີໃໝ່ປະເພນີຂອງຊາວຈີນ" ທີ່ລັດຖະບານຈີນ ສະເໜີ ຖືກຈັດເຂົ້າໃນບັນຊີລາຍຊື່ມໍລະດົກວັດທະນະທຳນາມມະທຳຂອງອົງການອຸຍເນສະໂກ ອົງການສະຫະປະຊາຊາດ ເຊິ່ງໝາຍຄວາມວ່າ: ຊາວຈີນທັງຫຼາຍຈະສະຫຼອງບຸນກຸດຈີນ ປີ 2025 ທີ່ເປັນມໍລະດົກວັດທະນະທຳນາມມະທຳຂອງໂລກເປັນຄັ້ງທຳອິດ.

